ຫົວບົດ: ການທ່ອງທ່ຽວ ແບບອະນຸລັກ ບ້ານນາ, ເມືອງທ່າພະບາດ, ແຂວງບໍລິຄຳໄຊ

The Ecotourism of Na Village, Thaphabath District ,Borikhamxay Province

ໂດຍ:

ທອງຄານ ອິນທະວົງ

# ບົດຄັດຫຍໍ້

ວຽກງານການສຶກສາການທ່ອງທ່ຽວ ແບບອະນຸລັກ ຢູ່ບ້ານນາ, ເມືອງທ່າພະບາດ, ແຂວງ ບໍລິ ຄໍາໄຊ ໃນການສຶກສາຄັ້ງນີ້ມີ 2 ຈຸດປະສົງໃຫຍ່ຄື:

- ສຶກສາສະພາບລວມການທ່ອງທ່ຽວແບບອະນຸລັກ ຢູ່ບ້ານນາ, ເມືອງທ່າພະບາດ, ແຂວງ ບໍລິຄໍາໄຊ (ກິດຈະກໍາການທ່ອງທ່ຽວ, ທີ່ພັກ, ອາຫານ, ສຸຂະອະນາໄມ, ຈໍານວນນັກທ່ອງທ່ຽວ, ລາຍໄດ້ຈາກ ການທ່ອງທ່ຽວ)
- ສຶກສາຜົນໄດ້ຮັບຈາກການມີສ່ວນຮ່ວມ ການກະຈາຍລາຍໄດ້ ຈາກການທ່ອງທ່ຽວ

ໃນການສຶກສາຄັ້ງນີ້ເຫັນໄດ້ເຖິງຄວາມສໍາຄັນຂອງວຽກງານການທ່ອງທ່ຽວ ທີ່ເປັນຂະແໜງ ການໜຶ່ງ ທີ່ມີຄວາມສໍາຄັນ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ຕໍ່ວຽກງານ ອະນຸລັກ

ໃນການສຶກສາຄັ້ງນີ້ແມ່ນມີການພົວພັນ ສົມທົບກັບຫ້ອງການທ່ອງທ່ຽວແຂວງບໍລິຄໍາໄຊ ແລະ ໜ່ວຍງານຄຸ້ມຄອງການທ່ອງທ່ຽວບ້ານນາ ໂດຍການສໍາພາດພະນັກ ງານຫ້ອງການທ່ອງ ທ່ຽວປະຈໍາ ແຂວງບໍລິຄໍາໄຊ ແລະ ພະນັກງານຄຸ້ມຄອງ ການທ່ອງທ່ຽວບ້ານນາ.

ຜົນການສຶກສາຄົ້ນຄ້ວາເຫັນວ່າ ບ້ານນາເປັນບ້ານໜຶ່ງ ທີ່ມີເສັ້ນທາງການຄົມມະນາຄົມ ແລະ ມີໄຟຟ້າໃຊ້ທຸກຄົວເຮືອນ, ບ້ານນາຢູ່ໃກ້ກັບປ່າສະຫງວນພູເຂົາຄວາຍ ແລະ ໄດ້ຮັບຜົນກະທົບຈາກ ຊ້າງປ່າ, ຊ້າງປ່າມາທໍາລາຍເຄື່ອງປູກຂອງປະຊາຊົນ ການມາຂອງຊ້າງ ແມ່ນມາເປັນປະຈໍາ ເຊິ່ງເປັນ ທີ່ສົນໃຈຂອງນັກທ່ອງທ່ຽວ ທີ່ຢາກເຂົ້າມາເບິ່ງຊ້າງປ່າ. ການທ່ອງທ່ຽວຢູ່ບ້ານນາ ແມ່ນມີການເດີນ ທາງທ່ຽວຊົມ ທໍາມະຊາດ ມີເສັ້ນທາງການເດີນປ່າ 3 ເສັ້ນທາງຄື: ເສັ້ນທາງແຕ່ຫໍຄອຍດັກເບິ່ງຊ້າງປ່າ ໄປຫານໍ້າຕົກແກ້ງທະນີ, ເສັ້ນທາງແຕ່ ຫໍ ຄອຍໄປຫາຕາດຟ້າ ແລະ ເສັ້ນທາງແຕ່ຫໍຄອຍດັກເບິ່ງຊ້າງປ່າ ໄປຫາຕາດລິງ. ນອກນີ້ ຍັງມີ ການນອນພັກແຮມທີ່ຫໍຄອຍດັກເບິ່ງຊ້າງປ່າ ແລະ ນອນພັກແຮມຢາມ ເຮືອນນໍາປະຊາຊົນ ຮຽນຮູ້ຊີວິຂອງປະຊາຊົນ, ປະຊາຊົນໃນບ້ານ ນອກນີ້ການທ່ອງທ່ຽວບ້ານນາ ແມ່ນເປັນການ ສ້າງຈິດສໍານຶກທາງສິ່ງແວລ້ອມ ແລະ ໃຫ້ຜົນປະໂຫຍດໂດຍກົງ ທາງດ້ານການເງິນ ແກ່ປະ ຊາຊົນໃນບ້ານ ແລະ ໃຫ້ຄວາມສໍາຄັນແກ່ວຽກງານອະນຸລັກ ການທ່ອງທ່ຽວບ້ານນາສະເລ່ຍ ແລ້ວ\ປີໜຶ່ງສ້າງລາຍຮັບ ໃຫ້ຄອບຄົວ 5,00,000 ກີບ/ ຄອບຄົວ/ ປີ, ສ້າງລາຍຮັບເຂົ້າກອງທຶນປ່າສະ ຫງວນແຫ່ງຊາດພູເຂົາຄວາຍ 9,500,000 ກີບ/ ປີ, ສ້າງລາຍຮັບເຂົ້າກອງທຶນບ້ານ 11,900,000 ກີບ/ ປີ ປັດຈຸບັນກອງທຶນໝູ່ບ້ານມີ 36,000,000 ກີບ, ລາຍຮັບຈາກການເກັບຄ່າພັກແມທີ່ຫໍຄອຍ ດັກເບິ່ງຊ້າງປ່າ 26,000,000 ກີບ/ ປີ ປັດຈຸບັນກອງທຶນຊົດເຊີຍ ແລະ ແກ້ໄຂຂໍ້ຂັດແຍ່ງບັນຫາຊ້າງ ປ່າ ແລະ ປະຊາຊົນ 10 ບ້ານ ປັດຈຸບັນມີ 7,400,000 ກີບ,

ບ້ານນາມີພະນັກງານນຳທ່ຽວ 13 ຄົນ ທີ່ມີຄວາມຮູ້ ຜ່ານການຝຶກ ອົບຮົມໃນດ້ານວິຊາພາສາ ອັງກິດ, ວິຊາໄກ້ນຳທ່ຽວ, ວິຊາປະຖົມພະຍາບານຂັ້ນພື້ນຖານ ແລະ ວິຊາການປຸງແຕ່ງອາຫານ ການ ທ່ອງທ່ຽວຢູ່ບ້ານນາ ແມ່ນປະຊາຊົນ ເປັນເຈົ້າຂອງໃນການທ່ອງ ທ່ຽວ, ປະຊາຊົນເປັນຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດເອງໂດຍອີງໃສ່ຮູບແບບການຈັດແບ່ງກຸ່ມ , ແບ່ງເວນກັນຮັບຜິດຊອບ.